STAY SAFE MN

# ພາບລວມຂອງການກວດຫາເຊື້ອໂຄວິດ-19 ແບບດ່ວນທີ່ໃຊ້ໃນຄົວເຮືອນ: iHealth

## ຈຸດທີ່ຮັບເອົາຊຸດກວດແບບດ່ວນທີ່ນຳໃຊ້ໃນຄົວເຮືອນແມ່ນຫຍັງ?

ເພື່ອຊ່ວຍຮັກສາສຸຂະພາບ ແລະ ຫຼຸດຜ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ຂອງຊຸມຊົນທ່ານ, ພະແນກ ສາທາລະ ນະສຸກລັດມິນນີໂຊຕ້າ (MDH) ໄດ້ມີການຮ່ວມມືກັບຕົວແທນສາທາລະນະສຸກທ້ອງຖິ່ນ, ຜູ້ນຳດ້ານສຸຂະພາບຂອງຊົນເຜົ່າ, ຊັ້ນວາງອາຫານ ແລະ ອົງການຈັດຕັ້ງຊຸມຊົນ ເພື່ອສະໜອງຊຸດກວດແບບດ່ວນໂດຍບໍ່ເສຍຄ່າໃຊ້ຈ່າຍ ໃຫ້ແກ່ຊາວເມືອງ ມິນນີໂຊຕ້າຢູ່ຈຸດຮັບທີ່ໄດ້ກຳນົດໄວ້.

## ຊຸດກວດສານກະຕຸ້ນການສ້າງພູມຕ້ານທານແບບດ່ວນ iHealth ແມ່ນຫຍັງ?

ຊຸດກວດສານກະຕຸ້ນການສ້າງພູມຕ້ານທານແບບດ່ວນ iHealth ຊ່ວຍໃນການກວດຈັບເຊື້ອໄວຣັສທີ່ກໍ່ໃຫ້ເກີດໂຄວິດ-19. ຖ້າທ່ານມີອາການ, ການກວດສາມາດບອກໄດ້ຢ່າງວ່ອງໄວວ່າທ່ານເປັນໂຄວິດ-19 ຫຼືບໍ່. ທ່ານສາມາດເຮັດການກວດ ໂດຍການຄັດດຮູດັງໄດ້ຢູ່ທຸກບ່ອນ ແລະ ໄດ້ຮູ້ຜົນກວດພາຍໃນ 15 ນາທີ.

## ຂ້ອຍຄວນຈະໃຊ້ເຄື່ອງກວດ iHealth ຂອງຂ້ອຍໄດ້ເມື່ອໃດ?

ທ່ານສາມາດໃຊ້ຊຸດກວດ iHealth ກັບສະມາຊິກໃນຄົວເຮືອນຂອງທ່ານຜູ້ທີ່ມີອາຍຸ 2 ປີ ຂຶ້ນໄປໄດ້ຕະຫຼອດເວລາ. ພະແນກສາທາລະນະສຸກລັດມິນນີໂຊຕ້າ ແນະນຳໃຫ້ມີການກວດ ເມື່ອມີເຫດການດັ່ງຕໍ່ໄປນີ້:

- ທ່ານຮູ້ສຶກວ່າມີອາການໂຄວິດ-19;
- ທ່ານໄດ້ໃກ້ຊິດກັບຄົນທີ່ເປັນໂຄວິດ-19;
- ທ່ານອາດໄດ້ສຳຜັດກັບຄົນທີ່ເປັນໂຄວິດ-19;
- ທ່ານກຳລັງກວດກ່ອນຈະເຂົ້າຮ່ວມງານລ້ຽງທີ່ມີຄົນຈຳນວນຫຼາຍ.

ຖ້າທ່ານໄດ້ກວດແຕ່ວ່າບໍ່ມີອາການ, ກະລຸນາເບິ່ງຄຳແນະນຳຂອງຊຸດ iHealth, ຫຼື ຄູ່ມືແນະນຳໃນການກັກຕົວຂອງ ພະແນກສາທາລະນະສຸກລັດມິນນີໂຊຕ້າ Close Contacts and Quarantine (www.health.state.mn.us/diseases/coronavirus/close.html).

## ຂ້ອຍໃຊ້ຊຸດກວດໄດ້ແນວໃດ?

**ກະລຸນາປະຕິບັດຕາມຄຳແນະນຳທຸກຂັ້ນຕອນທີ່ລະບຸໄວ້ຢູ່ໃນກ່ອງຂອງຊຸດກວດ.** ເພື່ອເບິ່ງວິທີການເຮັດວຽກຂອງຊຸດກວດ, ທ່ານສາມາດເບິ່ງວິດີໂອນີ້: How to use the iHealth COVID-19 Antigen Rapid Test (https://youtu.be/qBt_H4Gc-rU).

## ຈະເປັນແນວໃດ ຖ້າວ່າຂ້ອຍມີອາການແຕ່ຜົນກວດດ້ວຍເຄື່ອງ iHealth ມີຜົນເປັນລົບ?

ເຖິງແມ່ນວ່າຜົນກວດແບບດ່ວນນີ້ຈະມີຜົນເປັນລົບ, ຜູ້ທີ່ມີອາການຄວນຈະໃຊ້ການກວດຫາເຊື້ອໂຄວິດ-19 ດ້ວຍ PCR ແລະ ບໍ່ຄວນຈະກັບໄປເຮັດກິດຈະກຳທີ່ເຮັດປົກກະຕິຈົນກວ່າອາການຈະດີຂຶ້ນເປັນເວລາ 24 ຊົ່ວໂມງ. ຄົ້ນຫາທາງເລືອກຂອງການ ກວດດ້ວຍ PCR ໄດ້ທີ່ Minnesota COVID-19 Response (mn.gov/covid19/). ຖ້າທ່ານມີຄຳຖາມກ່ຽວກັບອາການຂອງທ່ານ, ຕິດຕໍ່ຫາທ່ານໝໍ ຫຼື ຜູ້ສະໜອງ ການປິ່ນປົວສຸຂະພາບຂອງທ່ານ.

## ຈະເປັນແນວໃດ ຖ້າຂ້ອຍກວດດ້ວຍຊຸດ iHealth ແລະ ມີຜົນເປັນບວກ?

ຖ້າທ່ານມີຜົນກວດເປັນບວກ, ໃຫ້ພັກຢູ່ເຮືອນ ແລະ ຢູ່ຫ່າງຈາກຄົນອື່ນ. ຖ້າທ່ານມີອາການ, ຕິດຕໍ່ຫາທ່ານໝໍ ຫຼື ຜູ້ສະໜອງ ການປິ່ນປົວສຸຂະພາບຂອງທ່ານ. ປະຕິບັດຕາມຄູ່ມືແນະນຳຂອງສາທາລະນະສຸກໄດ້ ທີ່ນີ້ If You Are Sick or Test Positive (www.health.state.mn.us/diseases/coronavirus/sick.html).

## ຂ້ອຍຈະເຮັດແນວໃດຖ້າຂ້ອຍມີຄຳຖາມ?

ກະລຸນາໂທຫາສາຍດ່ວນໂຄວິດ-19 ຂອງພະແນກ ສາທາລະນຸ ລັດມິນນີໂຊຕ້າ ທີ່ 1-833-431-2053, ເປີດບໍລິການ ວັນຈັນ ເຖິງ ວັນສຸກນັ ບແຕ່ເວລາ 9 ໂມງເຊົ້າ ຫາ 7 ໂມງແລງ, ແລະ ວັນເສົາ ນັບແຕ່ເວລາ 10 ໂມງເຊົ້າ ຫາ 6 ໂມງແລງ